Lao - ພຣະຄຳພີຕັນຫາຂອງ - Lust Scriptures

ອົບພະຍົກ 15:9 ພວກສັດຕຣູໄດ້ເວົ້າວ່າ ເຮົາຈະໄລ່ຕິດຕາມຈັບເອົາໃຫ້ໄດ້ ເຮົາຈະຍຶດເອົາຊັບສົມບັດຂອງພວກເຂົາ ຈະເອົາທຸກສິ່ງຈາກເຂົາທີ່ເຮົາຕ້ອງການ ເຮົາຈະຊັກດາບອອກແລະຍຶດເອົາທຸກສິ່ງທີ່ເຂົາມີດ້ວຍກຳລັງຂອງເຮົາ

ອົບພະຍົກ 18:21 ແຕ່ນອກຈາກນີ້ ທ່ານຈົ່ງເລືອກຄົນທີ່ສາມາດຈາກພວກປະຊາຊົນ ຄືຄົນທີ່ຢຳເກງພຣະເຈົ້າ ໄວ້ໃຈໄດ້ ແລະບໍ່ກິນສິນບົນ ແຕ່ງຕັ້ງຄົນຢ່າງນີ້ໄວ້ເປັນຜູ້ປົກຄອງຄົນພັນຄົນ ຮ້ອຍຄົນ ຫ້າສິບຄົນ ແລະສິບຄົນ

ອົບພະຍົກ 20:14 ຢ່າລ່ວງເກີນຜົວເມັຽຜູ້ອື່ນ

ອົບພະຍົກ 20:17 ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ ຢ່າອິດສາຢາກໄດ້ຜົວຫລືເມັຽ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ ຢາກໄດ້ລໍ່ຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ

ຈົດບັນຊີ 11:4 ພວກຕ່າງດ້າວທີ່ເດີນທາງຮ່ວມກັບພວກອິສຣາເອນກໍອຶດຢາກເປັນການໃຫຍ່ ແມ່ນແຕ່ພວກອິສຣາເອນເອງກໍຍັງຮ້ອງທຸກວ່າ “ຂໍຊີ້ນກິນແດ່”

ພຣະບັນຍັດສອງ 5:21 “ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ ຢ່າອິດສາຢາກໄດ້ຜົວ ຫລືເມັຽ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ ຢາກໄດ້ລໍ່ ຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ

ພຣະບັນຍັດສອງ 12:20 ເມື່ອພຣະຜູ້ເປັນເຈົ້າຊົງຂະຫຍາຍເຂດແດນຂອງທ່ານຕາມທີ່ຊົງສັນຍາໄວ້ແລ້ວ ພວກທ່ານຈະກິນຊີ້ນໄດ້ທຸກເວລາຕາມໃຈປາຖນາ

ພຣະບັນຍັດສອງ 22:22 “ຖ້າພົບຊາຍຄົນນຶ່ງໄປສົມສູ່ກັບພັຣຍາຂອງຄົນອື່ນ ທັງສອງຄົນ ຄືຊາຍທີ່ໄປສົມສູ່ກັບຍິງ ແລະຍິງຄົນນັ້ນຈະຕ້ອງມີໂທດເຖິງຕາຍ ດັ່ງນີ້ແຫລະທ່ານຈະກຳຈັດຄວາມຊົ່ວຈາກອິສຣາເອນ

ໂຍຊວຍ 7:21 ໃນຫມູ່ຂອງທີ່ຍຶດມາຂ້າພະເຈົ້າໄດ້ເຫັນເສື້ອຄຸມງາມໂຕນຶ່ງຂອງເມືອງບາບີໂລນ (ຊີນາຮ໌) ກັບເງິນສອງຮ້ອຍເຊເກລ ແລະທອງຄຳແທ່ງນຶ່ງຫນັກຫ້າສິບເຊເກລ ຂ້າພະເຈົ້າກໍໂລບຢາກໄດ້ຂອງເຫລົ່ານັ້ນ ຂ້າພະເຈົ້າຈຶ່ງເອົາມາ ເບິ່ງແມ໋,ຂອງເຫລົ່ານັ້ນເຊື່ອງຢູ່ໃຕ້ດິນໃນເຕັນຂອງຂ້າພະເຈົ້ານັ້ນຢູ່ຂ້າງລຸ່ມ

ເພງສັຣເສີນ 10:3 ເພາະຄົນອະທັມອວດເຖິງສິ່ງທີ່ໃຈເຂົາຢາກໄດ້ນັ້ນ ແລະຄົນທີ່ໂລບມາກໃນ

ກຳໄຮ ກໍແຊ່ງດ່າ ແລະປະນາມພຣະເຈົ້າ

ເພງສັນລະເສີນ 78:18 ເຂົາທົດລອງພຣະເຈົ້າຢູ່ໃນໃຈຂອງເຂົາ ໂດຍຮຽກຮ້ອງອາຫານທີ່ເຂົາຢາກ

ເພງສັນລະເສີນ 78:30 ແຕ່ກ່ອນທີ່ເຂົາຈະຫາຍຢາກ ໃນຂນະທີ່ອາຫານຍັງຢູ່ໃນປາກຂອງເຂົາ

ເພງສັນລະເສີນ 81:12 ເຮົາຈຶ່ງມອບເຂົາໄວ້ແກ່ຈິດໃຈດື້ດ້ານຂອງເຂົາເອງ ໃຫ້ຕາມຄຳປຶກສາຂອງເຂົາເອງ

ເພງສັນລະເສີນ 106:14 ແຕ່ໃນຖິ່ນກັນດານນັ້ນທ່ານມີຄວາມຢາກຢ່າງຮຸນແຮງ ແລະໄດ້ທົດລອງພຣະເຈົ້າໃນທີ່ແຫ້ງແລ້ງ

ເພງສັນລະເສີນ 119:36 ຂໍຊົງໂນ້ມໃຈຂ້າພຣະອົງໃນບັນດາພຣະໂອວາດຂອງພຣະອົງ ແລະບໍ່ແມ່ນໃນທາງໂລບກຳໄຮ

ສຸພາສິດ 1:19 ຄວາມໂຫດຮ້າຍທາຮຸນຍ່ອມຕົກຖືກຕົນຕົວ ແລະຊີວິດຂອງຜູ້ທຳສເມີ ນີ້ເປັນສິ່ງທີ່ເກີດຂຶ້ນກັບທຸກໆຄົນທີ່ມີຊີວິດຢູ່ດ້ວຍການເປັນຂະໂມຍ

ສຸພາສິດ 6:25 ຢ່າປາຖນາຄວາມງາມຂອງນາງຢູ່ໃນໃຈຂອງເຈົ້າ ຢ່າໃຫ້ນາງຈັບເຈົ້າດ້ວຍຂົນຕາຂອງນາງ

ສຸພາສິດ 15:27 ບຸກຄົນຜູ້ທີ່ຫາກຳໄຮໃນທາງລັດກໍກະທຳຄວາມລຳບາກມາສູ່ຄອບຄົວຂອງຕົນ ແຕ່ບຸກຄົນຜູ້ກຽດຊັງສິນບົນຈະມີຊີວິດຢູ່

ສຸພາສິດ 21:25,26 ຄວາມປາຖນາຂອງຄົນຂີ້ຄ້ານຂ້າຕົວເຂົາເອງ ເພາະມືຂອງເຂົາປະຕິເສດບໍ່ທຳງານ 26 ຄົນໂລບກໍໂລບຢູ່ຕລອດວັນ ແຕ່ຄົນຊອບທັມໃຫ້ແລະບໍ່ຫນ່ວງຫນ່ຽວໄວ້

ສຸພາສິດ 28:16 ຜູ້ຄອບຄອງທີ່ຂາດຄວາມເຂົ້າໃຈກໍເປັນຜູ້ບີບບັງຄັບທີ່ດຸຮ້າຍ ແຕ່ບຸກຄົນທີ່ກຽດຊັງກຳໄຮອະທັມຍ່ອມຍືດເວລາຂອງເຂົາອອກໄປ

ເອຊາຢາ 56:11 ຫມາເຫລົ່ານັ້ນຫິວຈັດ ກິນບໍ່ຮູ້ຈັກອີ່ມ ຜູ້ລ້ຽງແກະກໍບໍ່ມີຄວາມເຂົ້າໃຈເສັງດ້ວຍ ເຂົາທຸກຄົນກັບໄປຕາມທາງເຂົາເອງ ຕ່າງກໍຫາກຳໄຮໃສ່ຕົນເອງ ບໍ່ເວັ້ນຈັກຄົນ

ເອຊາຢາ 57:17 ເຮົາໂກດເພາະຄວາມບາບຜິດແຫ່ງຄວາມໂລບຂອງເຂົາ ເຮົາຕີເຂົາ ເຮົາລີ້ຊ່ອນຕົວແລະໂກດ ແຕ່ເຂົາຍັງຫັນກັບເດີນຕາມຊອບໃຈຂອງເຂົາຢູ່

ເຢເຣມີ 6:13 ເພາະວ່າ ຕັ້ງແຕ່ຄົນທີ່ຕ່ຳຕ້ອຍທີ່ສຸດຈົນເຖິງຄົນໃຫຍ່ໂຕທີ່ສຸດ ທຸກຄົນໂລບຢາກໄດ້ກຳໄລ ແລະທຸກຄົນກໍກະທຳການດ້ວຍຄວາມເທັດ ຕັ້ງແຕ່ຜູ້ປະກາດພຣະທັມ

ຄວອດເຖິງປະໂຣຫິດ

ເຢເຣມີ 22:17 ແຕ່ເຈົ້າມີຕາແລະໃຈ ໄວ້ພຽງມຸ່ງເອົາກຳໄລສ່ວນຕົວເພື່ອຫລັ່ງໂລຫິດທີ່ໄຮ້ຄວາມຜິດໃຫ້ເຖິງຕາຍ ແລະເພື່ອປະຕິບັດການບີບບັງຄັບແລະຄວາມທາຣຸນ

ເຢເຣມີ 51:13 ເຈົ້າຜູ້ອາໄສຕາມນ້ຳມາກຫລາຍ ຜູ້ມີສົມບັດມາກມາຍເອີຍ ອາວະສານຂອງເຈົ້າມາເຖິງແລ້ວ ເສັ້ນຊີວິດຂອງເຈົ້າໄດ້ຖືກຕັດຂາດເສັຍແລ້ວ

ເອເຊກຽນ 6:9 ແລ້ວຄົນໃນພວກເຈົ້າທີ່ຫນີໄປໄດ້ນັ້ນ ຈະຣະລຶກເຖິງເຮົາຖ້ຳມກາງປະຊາຊາດ ຊຶ່ງເຂົາຖືກກວາດໄປເປັນຊະເລີຍນັ້ນ ເມື່ອເຮົາທຳລາຍໃຈຣິສຍາ ຊຶ່ງໄດ້ພາກຈາກເຮົາໄປ ນັ້ນແລ້ວ ແລະທຳລາຍຕາທີ່ມອງເບິ່ງຮູບເຄົາຣົບຢ່າງໃຈອິດສານັ້ນເສັຍ ແລະເຂົາຈະກຽດຕົວເອງ ເຫດດ້ວຍຄວາມຊົ່ວ ຊຶ່ງເຂົາໄດ້ກະທຳ ແລະສິ່ງທີ່ຫນ້າກຽດຫນ້າຊັງທັງສິ້ນຂອງເຂົາດ້ວຍ

ເອເຊກຽນ 14:4,5 ເຫດສັນນັ້ນຈົ່ງເວົ້າກັບເຂົາ ແລະກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ ຄົນໃດໃນເຊື້ອສາຍອິສຣາເອນເອົາຮູບເຄົາຣົບຂອງເຂົາໄວ້ໃນໃຈ ແລະວາງສິ່ງທີ່ສະດຸດໃຫ້ທຳບາບຜິດໄວ້ຂ້າງຫນ້າເຂົາ ແລະຍັງມາຫາຜູ້ປະກາດພຣະທັມ ເຮົາຄືພຣະຜູ້ເປັນເຈົ້າຈະຕອບເຂົາເອງ ໃນເຣື່ອງຮູບເຄົາຣົບຫລວງຫລາຍຂອງເຂົານັ້ນ 5 ເພື່ອເຮົາຈະໄດ້ຍຶດຈິດໃຈຂອງເຊື້ອສາຍອິສຣາເອນ ຜູ້ເຫີນຫ່າງໄປຈາກເຮົາທຸກຄົນດ້ວຍເຣື່ອງຮູບເຄົາຣົບຂອງເຂົາ

ເອເຊກຽນ 22:12 ໃນເຈົ້າມີຄົນຮັບສິນບົນ ເພື່ອກະທຳໃຫ້ໂລຫິດຕົກ ເຈົ້າເອົາດອກເບ້ຍ ແລະເອົາເງິນເພີ່ມ ແລະທຳກຳໄລຈາກເພື່ອນບ້ານຂອງເຈົ້າໂດຍການບີບບັງຄັບ ແລະເຈົ້າໄດ້ລືມເຮົາເສັຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

ເອເຊກຽນ 33:31 ດັ່ງນັ້ນໄພ່ພົນຂອງເຮົາຈຶ່ງຫລັ່ງໄຫລກັນມາຟັງ ແຕ່ພວກເຂົາບໍ່ໄດ້ທຳຕາມເຈົ້າບອກ ເພາະວ່າພວກເຂົາມັນເວົ້າຕົວະ ແລະມັກເງິນຄຳຫລາຍກວ່າ ພຣະທັມຂອງພຣະເຈົ້າ

ໂຮເຊອາ 4:12 ເຂົາໄດ້ປະຖິ້ມເຮົາແລະຖວາຍຕົວເອງແກ່ພຣະອື່ນເຫມືອນຜູ້ຍິງການເປັນໂສເພນີ

ໂຮເຊອາ 5:4 ຄວາມຊົ່ວທີ່ປະຊາຊົນກະທຳນັ້ນ ໄດ້ກີດກັ້ນບໍ່ໃຫ້ພວກເຂົາກັບຄືນໄປຫາພຣະເຈົ້າຂອງເຂົາ ພວກເຂົາຍອມຢູ່ໃຕ້ອຳນາດຮູບເຄົາຣົບ ເຂົາຈຶ່ງບໍ່ຮູ້ຈັກພຣະຜູ້ເປັນເຈົ້າ

ມີກາ 2:2 ເມື່ອພວກເຂົາຕ້ອງການທົ່ງນາ ແລະບ້ານເຮືອນພວກເຂົາກໍຍຶດເອົາໄປ ພວກເຂົາ ໃຊ້ກຳລັງແລະເລ່ຫລ່ຽມຫລອກເອົາເຮືອນແລະທີ່ດິນຂອງເຈົ້າຊັບ

ນາຮູມ 3:4 ທັງນີ້ເພາະການແພດສະຍາ ນັບບໍ່ຖ້ວນຂອງຍິງແພດສະຍານັ້ນ ຜູ້ມີສເນ່ແລະ ເປັນຈອມຍົ້ວຍວນ ນາງໄດ້ຂາຍປະຊາຊາດເສັ່ງດ້ວຍການແພດສະຍາຂອງນາງ ແລະຂາຍ ບັນດາຕະກູນມະນຸດດ້ວຍວິທະຍາຄົມຂອງນາງ

ຮາລາກຸກ 2:9 ເຄາະກຳຂອງເຈົ້າມາເຖິງແລ້ວ ພວກເຈົ້າໄດ້ທຳໃຫ້ຄອບຄົວຮັ່ງມີເປັນດີຂຶ້ນ ຍ້ອນເຂັນຂ້າທາລຸນຄົນອື່ນ ແລ້ວພະຍາຍາມທຳໃຫ້ຄອບຄົວຢູ່ຢ່າງສງົບສຸກແລະປອດພັຍ

ມັດທາຍ 5:28 ແຕ່ຝ່າຍເຮົາ, ເຮົາບອກທ່ານທັງຫລາຍວ່າ ຜູ້ໃດເບິ່ງແມ່ຍິງດ້ວຍໃຈກຳຫນັດ ໃນຍິງນັ້ນ ຜູ້ນັ້ນໄດ້ຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ

ມາຣະໂກ 4:19 ແລ້ວຄວາມກັງວົນຕາມທຳມະດາໂລກ ແລະຄວາມຫລອກລວງແຫ່ງຊັບສົມ ບັດກັບຄວາມໂລບໃນສິ່ງອື່ນໆໄດ້ເຂົ້າມາຫຸ້ມຮັດພຣະທັມນັ້ນເສັ່ງ ຈຶ່ງບໍ່ເກີດຜົນ

ມາຣະໂກ 7:22 ການຫລິ້ນຊູ້ຈາກຜົວເມັ່ງ ການໂລບ ການອະທັມ ການລໍ້ລວງ ຣາຄະຕັນຫາ ການອິດສາ ການນິນທາ ຄວາມຈອງຫອງ ຄວາມໂງ່ທີ່ປ່ອຍຕົວໄປຕາມລຳພັງໃຈ

ລູກາ 3:14 ພວກທະຫານກໍຖາມທ່ານເຫມືອນກັນວ່າ, “ພວກຂ້ານ້ອຍເດ ຈະເຮັດແນວໃດ” ທ່ານຈຶ່ງຕອບເຂົາວ່າ, “ຢ່າຂົ່ມເຫັງຫລືຢ່າຫາຄວາມບໍ່ຈິງໃສ່ໃຜເພື່ອເອົາເງິນ ແຕ່ຈົ່ງພໍໃຈ ໃນຄ່າຈ້າງຂອງຕົນ”

ລູກາ 12:15 ແລ້ວພຣະອົງຈຶງບອກເຂົາວ່າ, “ຈົ່ງລະວັງ ແລະຮັກສາໄວ້ຈາກການໂລບທຸກຢ່າງ ເພາະຊີວິດຂອງມະນຸດບໍ່ຂຶ້ນຢູ່ກັບເຂົ້າຂອງອັນບໍຣິສຸດທີ່ຕົນມີນັ້ນ”

ລູກາ 16:14 ຝ່າຍພວກຟາຣິຊາຍທີ່ມີໃຈຮັກຊັບ ເມື່ອໄດ້ຍິນຄຳເຫລົ່ານັ້ນແລ້ວກໍກ່າວເຍາະ ເຍີ້ຍພຣະອົງ

ໂຍຮັນ 8:44 ທ່ານທັງຫລາຍມາຈາກພໍ່ຂອງທ່ານຄືມານ ພວກທ່ານມີໃຈຢາກເຮັດຕາມ ຄວາມປາຖນາຂອງພໍ່ທ່ານ ມັນເປັນຜູ້ຂ້າຄົນຕັ້ງແຕ່ເດີມມາແລ້ວ ແລະບໍ່ໄດ້ຕັ້ງຢູ່ໃນ ຄວາມຈິງ ເພາະໃນຕົວມັນບໍ່ມີຄວາມຈິງ ເມື່ອມັນເວົ້າຕົວະມັນກໍເວົ້າຕາມສັນດານຂອງ ມັນເອງ ເພາະເປັນຜູ້ຕົວະແລະເປັນພໍ່ຂອງການຕົວະ

ກິຈການ 20:33 ເຮົາບໍ່ໄດ້ໂລບເອົາເງິນ ເອົາຄຳ ຫລືເສື້ອຜ້າຂອງຜູ້ໃດ

ໂຣມ 1:24-29 ເພາະສັນນັ້ນ, ພຣະເຈົ້າຈຶ່ງຈຶງປ່ອຍເຂົາໃຫ້ເຮັດການຊົ່ວຊ້າ ຕາມຣາຄະຕັນຫາ

ໃນໃຈຂອງເຂົາ ເຂົາຈຶ່ງເຮັດສິ່ງຫນ້າອັບອາຍທາງຮ່າງກາຍຕໍ່ກັນ 25 ເຂົາໄດ້ເອົາຄວາມຈິງ
ເຣື່ອງພຣະເຈົ້າມາປ່ຽນເປັນຄວາມບໍ່ຈິງ ແລະໄດ້ນະມັສການທັງບົວຣະບັດສິ່ງທີ່ຊົງສ້າງໄວ້
ນັນແທນພຣະອົງຜູ້ຊົງສ້າງ ຄືຜູ້ທີ່ສົມຄວນຈະໄດ້ຮັບຄວາມສັຣເສີນເປັນນິດ ອາແມນ 26
ເພາະເຫດນັ້ນ, ພຣະເຈົ້າຈຶ່ງຊົງປ່ອຍເຂົາໃຫ້ມີຣາຄະຕັນຫາອັນຫນ້າອັບອາຍ ພວກຜູ້ຍິງ
ຂອງເຂົາກໍປ່ຽນການສັມພັນຕາມທໍາມະຊາດໃຫ້ຜິດທໍາມະຊາດໄປ 27 ຝ່າຍຜູ້ຊາຍກໍ
ເຫມືອນກັນ ໄດ້ເລີກການສັມພັນກັບຜູ້ຍິງຕາມທໍາມະຊາດ ແລະຮີບຮ້ອນດ້ວຍໄຟແຫ່ງ
ຣາຄະຕັນຫາທີ່ມີຕໍ່ກັນ ຜູ້ຊາຍກັບຜູ້ຊາຍພາກັນເຮັດການຊົ່ວຫນ້າອັບອາຍຕໍ່ກັນ ເຂົາຈຶ່ງ
ໄດ້ຮັບຜົນກັມອັນສົມຄວນກັບຄວາມຜິດຂອງເຂົາໃນຕົວເຂົາເອງ 28 ເຂົາບໍ່ເຫັນດີທີ່ຈະ
ຮັບຮູ້ພຣະເຈົ້າ ພຣະອົງຈຶ່ງຊົງປ່ອຍໃຫ້ເຂົາມີໃຈຊົ່ວແລະເຮັດສິ່ງທີ່ບໍ່ສົມຄວນ 29 ພວກ
ເຂົາເຕັມໄປດ້ວຍການອະທັມທຸກຢ່າງ ການຊົ່ວຮ້າຍ ຄວາມໂລບ ຄວາມປອງຮ້າຍ ເຕັມໄປ
ດ້ວຍຄວາມເຫົ່ງສາ ການຂ້າຟັນ ການວິວາດ ການລໍ້ລວງ ການຜູກພຍາບາດ ການສັບສໍ່

ໂຣມ 6:12 ເຫດສັນນັ້ນ, ຕໍ່ໄປຢ່າໃຫ້ຄວາມຜິດບາບບົກຄອງຮ່າງກາຍທີ່ຕ້ອງຕາຍຂອງເຈົ້າ
ທັງຫລາຍ ຊຶ່ງເຮັດໃຫ້ຕ້ອງເຊື່ອຟັງຕັນຫາຂອງກາຍນັ້ນ

ໂຣມ 7:7 ຖ້າຢ່າງນັ້ນແລ້ວເຮົາຈະວ່າຢ່າງໃດ ພຣະບັນຍັດນັ້ນຄືບາບຫລື ບໍ່ແມ່ນຢ່າງນັ້ນ
ດອກ ແຕ່ຖ້າພຣະບັນຍັດບໍ່ໄດ້ບົ່ງໄວ້ ເຮົາກໍຄົງບໍ່ໄດ້ຮູ້ວ່າອັນໃດເປັນຄວາມຜິດບາບ ເພາະ
ວ່າຖ້າພຣະບັນຍັດບໍ່ໄດ້ຫ້າມວ່າ, “ຢ່າໂລບ” ເຮົາກໍຄົງບໍ່ຮູ້ວ່າຄວາມໂລບນັ້ນຄືອັນໃດ

ໂຣມ 13:9 ເພາະວ່າຂໍ້ບັນຍັດທີ່ກ່າວວ່າ, “ຢ່າຫລິ້ນຊູ້ ຢ່າຂ້າຄົນ ຢ່າລັກຊັບ ຢ່າໂລບ” ທັງບັນ
ຍັດຂໍ້ອື່ນໆກໍຮວມຢູ່ໃນຂໍ້ນີ້ ຄື, “ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ”

ໂຣມ 13:14 ແຕ່ຈົ່ງປະຕິບັດຕົວດ້ວຍພຣະເຢຊູຄຣິດເຈົ້າ ແລະຢ່າຈັດຫາອັນໃດເພື່ອບໍາຣຸງ
ຕັນຫາຂອງເນື້ອກາຍ

1 ໂກຣິນໂທ 5:10,11 ແຕ່ບໍ່ໃຊ່ຫມາຍເຖິງຊາວໂລກທີ່ຫລິ້ນຊູ້, ຫລືຄົນໂລບ, ຄົນຂົ່ມຂູ່, ຄົນ
ຂາບໄຫວ້ພຣະທຽມກໍດີ ເພາະວ່າຖ້າຫ້າມຢ່າງນັ້ນແລ້ວ ເຈົ້າທັງຫລາຍກໍຈະຕ້ອງອອກໄປ
ເສັຽຈາກໂລກນີ້ 11 ແຕ່ເຮົາໄດ້ຂຽນມາບອກພວກເຈົ້າວ່າ ຖ້າຜູ້ໃດໄດ້ຊື່ວ່າເປັນພີ່ນ້ອງ
ແລ້ວ ແຕ່ຍັງເປັນຄົນຫລິ້ນຊູ້, ຫລືຄົນໂລບ, ຄົນຂາບໄຫວ້ພຣະທຽມ, ຄົນເວົ້າຫຍາບຊ້າ,
ຄົນຂີ້ເຫລົ້າ, ຄົນຂົ່ມຂູ່ກໍດີ ຢ່າຄົບຫາກັບຄົນຢ່າງນັ້ນ ແມ່ນແຕ່ກິນເຂົ້າຮ່ວມກໍຢ່າຊູ່ກິນ

1 ໂກຣິນໂທ 6:9,10 ເຈົ້າທັງຫລາຍບໍ່ຮູ້ຫລືວ່າຄົນອະທັມຈະບໍ່ມີສ່ວນໃນຣາຊອານາຈັກຂອງ

ພຣະເຈົ້າ ຢ່າເຂົ້າໃຈຜິດວ່າຄົນຫລິ້ນຊູ້ກໍດີ ຫລືຄົນຂາບໄຫວ້ພຣະທຽມ ຄົນຜິດຈາກຜົວ ເມັຽກັນ ຊາຍຫລິ້ນຄືຍິງ ຊາຍຫລິ້ນກັບຊາຍ 10 ຄົນຂະໂມຍ ຄົນໂລບ ຄົນຂີ້ເຫລົ້າ ຄົນເວົ້າ ຫຍາບຊ້ຳ ຄົນຂົ່ມຂູ່ກໍດີ ຈະບໍ່ໄດ້ຮັບສ່ວນໃນຣາຊອານາຈັກຂອງພຣະເຈົ້າ

1 ໂກຣິນໂທ 10:6 ເຫດການເຫລົ່ານີ້ເປັນຕົວຢ່າງເຕືອນໃຈເຮົາທັງຫລາຍ ບໍ່ໃຫ້ພວກເຮົາມີ ໃຈໂລບແລະປາຖນາສິ່ງຊົ່ວເຫມືອນເຂົາເຫລົ່ານັ້ນ

1 ໂກຣິນໂທ 12:31 ແຕ່ເຈົ້າທັງຫລາຍຈົ່ງຮ້ອນໃຈສແວງຫາຂອງພຣະຣາຊທານອັນສຳຄັນ ກວ່ານັ້ນ ແລະເຮົາຈະສະແດງທາງອັນດີຫລາຍກວ່ານັ້ນອີກແກ່ພວກເຈົ້າ

1 ໂກຣິນໂທ 14:39 ດັ່ງນີ້ແຫລະ, ພີ່ນ້ອງທັງຫລາຍເອີຍ, ຈົ່ງຮ້ອນໃຈສແວງຫາທີ່ຈະປະກາດ ພຣະທັມ ສ່ວນການປາກພາສາແປກງນັ້ນກໍຢ່າຊູ່ຫ້າມ

2 ໂກຣິນໂທ 9:5 ເຫດສັນນັ້ນເຮົາຈຶ່ງຄິດເຫັນວ່າຈຳເປັນຕ້ອງຕັກເຕືອນພີ່ນ້ອງເຫລົ່ານັ້ນ ໃຫ້ ໄປຫາເຈົ້າທັງຫລາຍກ່ອນເຮົາ ແລະໃຫ້ຈັດແຈງເຄື່ອງທານຂອງເຈົ້າທັງຫລາຍໄວ້ຕາມທີ່ໄດ້ ສັນຍາໄວ້ແລ້ວ ເພື່ອເຄື່ອງທານນັ້ນຈະມີຢູ່ພ້ອມ ເຫມືອນເປັນເຄື່ອງທານທີ່ໃຫ້ດ້ວຍໃຈ ສັດທາ ບໍ່ໃຊ່ດ້ວຍຂຶ້ນໃຈ

ຄາລາເຕຍ 5:16-20 ແຕ່ເຮົາຂໍບອກວ່າ ຈົ່ງຍອມໃຫ້ພຣະວິນຍານເປັນຜູ້ຊົງນຳພາ ແລະເຈົ້າ ທັງຫລາຍຈະບໍ່ໄດ້ເຮັດຕາມຕັນຫາຂອງມະນຸດ 17 ເພາະວ່າມະນຸດທັມມະດາມີຕັນຫາຕໍ່ສູ້ ກັບພຣະວິນຍານ ແລະພຣະວິນຍານກໍຕໍ່ສູ້ກັບມະນຸດ ເພາະທັງສອງຝ່ານເປັນສັດຕຣູກັນ ດັ່ງນັ້ນສິ່ງທີ່ເຈົ້າທັງຫລາຍຢາກເຮັດ ພວກເຈົ້າຈຶ່ງເຮັດບໍ່ໄດ້ 18 ແຕ່ຖ້າພຣະວິນຍານຊົງນຳ ພາເຈົ້າທັງຫລາຍໄປ ພວກເຈົ້າກໍບໍ່ຢູ່ໃຕ້ພຣະບັນຍັດ 19 ແຕ່ການງານຂອງມະນຸດທັມມະ ດານັ້ນກໍປາກົດແຈ້ງແລ້ວ ຄືການຫລິ້ນຊູ້ ການບໍ່ສະອາດ ການໂລພະຕັນຫາ 20 ການໄຫວ້ ພຣະທຽມ ການເຊື່ອເວດມົນຄາຖາ ການເປັນສັດຕຣູກັນ ການວິວາດຜິດຖຽງກັນ ການ ເຫີງສາກັນ ການຄຽດແຄ້ນກັນ ການໃຝ່ສູງຕໍ່ກັນ ການແຕກແຍກກັນ ການຖືພັກຖື ພວກ

ຄາລາເຕຍ 5:24 ຜູ້ທີ່ຢູ່ຝ່ານພຣະເຍຊູຄຣິດກໍໄດ້ເອົາຄວາມປາຖນາກັບຕັນຫາຂອງມະນຸດ ທັມມະດານັ້ນຄຶງໄວ້ທີ່ໄມ້ກາງແຂນແລ້ວ

ເອເຟໂຊ 2:1-3 ພຣະເຈົ້າໄດ້ຊົງບັນດານໃຫ້ທ່ານທັງຫລາຍຄືນມີຊີວິດເຫມືອນກັນ ເຖິງແມ່ນ ວ່າທ່ານທັງຫລາຍຕາຍແລ້ວໂດຍການຫລົງຜິດແລະເຮັດບາບ 2 ເມື່ອກ່ອນພວກທ່ານ

ເຄີຍດຳເນີນຢູ່ໃນການບາບນັ້ນຕາມວິທີຂອງໂລກ ຕາມເຈົ້ານາຍແຫ່ງຍ່ານອາກາດ ຄືວິນ
ຍານທີ່ຄອບຄອງຢູ່ໃນຄົນທັງຫລາຍທີ່ບໍ່ເຊື່ອຟັງ 3 ເມື່ອກ່ອນ, ເຮົາທັງປວງເຄີຍດຳເນີນຊີ
ວິດຕາມຕັນຫາຂອງຝ່າຍມະນຸດທັມມະດາເຫມືອນຄົນເຫລົ່ານັ້ນ ຄືດຳເນີນໄປຕາມ
ຄວາມປາຖນາຂອງຮ່າງກາຍແລະຂອງຈິດໃຈ ຕາມສັນດານພວກເຮົາເປັນຄົນຄວນຖືກ
ພຣະພິໂຣດເຫມືອນດັ່ງຄົນອື່ນ

ເອເຟໂຊ 4:19 ເຂົາບໍ່ມີຄວາມຮູ້ສຶກຍ້ານກົວຕໍ່ບາບ ຈຶ່ງໄດ້ປ່ອຍຕົວໄປໃນທາງໂລພະຕັນຫາ
ເພື່ອເຮັດການຊົ່ວຮ້າຍທຸກຢ່າງໂດຍສຸດຄວາມປາຖນາ

ເອເຟໂຊ 4:22-27 ພວກທ່ານຈົ່ງຖອດຖິ້ມສະພາບມະນຸດເກົ່າຂອງຕົນຊຶ່ງຄູ່ກັບວິຖີຊີວິດ
ເດີມນັ້ນເສັຍ ທີ່ກຳລັງເສື່ອມເສັຍໄປສູ່ຄວາມຕາຍຕາມຕັນຫາອັນເປັນທີ່ຫລອກລວງນັ້ນ
23 ແລະຈົ່ງໃຫ້ວິນຍານຈິດຂອງທ່ານຖືກຊົງຕັ້ງຂຶ້ນໃຫມ່ 24 ແລະໃຫ້ທ່ານທັງຫລາຍສວມ
ສະພາບມະນຸດໃຫມ່ ຊຶ່ງຊົງສ້າງຂຶ້ນໃຫມ່ຕາມແບບລັກສະນະຂອງພຣະເຈົ້າໃນຄວາມຊອບ
ທັມ ແລະຄວາມບໍຣິສຸດທີ່ແທ້ຈິງ 25 ເຫດສັນນັ້ນ, ທ່ານທັງຫລາຍຈົ່ງເລີກກ່າວຄວາມ
ຕົວະເສັຍ "ທຸກຄົນຈົ່ງກາວຄວາມຈິງຕໍ່ເພື່ອນບ້ານຂອງຕົນ" ເພາະວ່າເຮົາທັງຫລາຍເປັນ
ອະວັຍວະຂອງກັນແລະກັນ 26 ຈະຮ້າຍກໍຮ້າຍໄດ້ ແຕ່ຢ່າໃຫ້ຄວາມຮ້າຍເປັນເຫດໃຫ້ເກີດ
ການຜິດບາບ ຢ່າຮ້າຍຢູ່ຈົນຕາເວັນຕົກ 27 ແລະຢ່າປ່ອຍໂອກາດໃຫ້ມານ

ເອເຟໂຊ 5:3,5 ແຕ່ການເອີ່ຍເຖິງການຫລິ້ນຊູ້ ການຊົ່ວຮ້າຍທຸກຢ່າງ ຫລືຄວາມໂລພະຕັນ
ຫາກໍດີ ຢ່າໃຫ້ມີຂຶ້ນໃນຖ້ຳມກາງທ່ານທັງຫລາຍ ເພື່ອຈະໄດ້ເຫມາະສົມກັບພວກທ່ານເປັນ
ໄພ່ພົນຂອງພຣະເຈົ້າ 5 ເພາະວ່າເຣື່ອງນີ້ທ່ານທັງຫລາຍຄົງຮູ້ແນ່ວ່າ ຄົນຫລິ້ນຊູ້ ຄົນຊົ່ວ
ຮ້າຍ ຄົນໂລພະຕັນຫາ (ທີ່ເປັນເຫມືອນຄົນທີ່ໄຫວ້ພຣະທຽມ) ກໍດີ ຈະມີສ່ວນໃນຣາຊອາ
ນາຈັກຂອງພຣະຄຣິດແລະຂອງພຣະເຈົ້າບໍ່ໄດ້

ໂກໂລຊາຍ 3:5 ເຫດສັນນັ້ນຈົ່ງປະຫານນິສັຍສ່ວນທີ່ອ່ຽງໄປຜ່າຍໂລກຂອງເຈົ້າທັງຫລາຍນັ້ນ
ເສັຍ ຄືການຫລິ້ນຊູ້ ການຊົ່ວຮ້າຍ ຣາຄະຕັນຫາ ຄວາມປາຖນາຊົ່ວ ແລະຄວາມໂລບ ຊຶ່ງ
ເປັນການໄຫວ້ພຣະທຽມ

1 ເທຊະໂລນິກ 2:5 ເພາະວ່າພວກເຮົາບໍ່ໄດ້ໃຊ້ຖ້ອຍຄຳຖແລງຍ້ອງຍໍຈັກເທື່ອ ຕາມດັ່ງທີ່ເຈົ້າ
ທັງຫລາຍຮູ້ແລ້ວ ຫລືບໍ່ໄດ້ໃຊ້ກົນອຸບາຍບົກບັງໂລພະຕັນຫາໄວ້ ພຣະເຈົ້າຊົງເປັນພຍານ
ຝ່າຍພວກເຮົາ

1 ເທຊະໂລນິກ 4:3-7 ອັນນີ້ແຫລະ, ເປັນນ້ຳພຣະທັຍຂອງພຣະເຈົ້າ ຄືໃຫ້ເຈົ້າທັງຫລາຍເປັນ
ຄົນບໍຣິສຸດ ໃຫ້ພວກເຈົ້າລະເວັ້ນຈາກການຜິດຊາຍຍິງ 4 ໃຫ້ເຈົ້າທຸກຄົນຮູ້ຈັກມີພັຣຍາໃນ
ທາງບໍຣິສຸດ ແລະໃນທາງນັບຖື 5 ບໍ່ໃຊ່ດ້ວຍຣາຄະຕັນຫາຕາມດັ່ງພວກນອກຊາດທີ່ບໍ່ຮູ້
ຈັກພຣະເຈົ້າ 6 ຢ່າໃຫ້ຜູ້ໃດລ່ວງເກີນແລະເຮັດຜິດຕໍ່ພີ່ນ້ອງຂອງຕົນໃນເຣື່ອງນີ້ ເພາະວ່າ
ອົງພຣະຜູ້ເປັນເຈົ້າເປັນຜູ້ຊົງແກ້ແຄ້ນຄົນທີ່ເຮັດຜິດແນວນັ້ນ ຕາມດັ່ງພວກເຮົາໄດ້ບອກ
ພວກເຈົ້າຢ່າງຫນັກແຫນ້ນໄວ້ກ່ອນແລ້ວ
1 ຕິໂມທຽວ 3:3,8 ບໍ່ເປັນຄົນເມົາເຫລົ້າ ບໍ່ເປັນຄົນຫຍາບຊ້ຳສາໂຫດ ແຕ່ເປັນຄົນມີໃຈສຸ
ພາບ ບໍ່ເປັນຄົນມັກຜິດຖຽງກັນ ບໍ່ເປັນຄົນເຫັນແກ່ເງິນ 8 ຝ່າຍພວກຜູ້ບົວລະບັດນັ້ນກໍ
ເຫມືອນກັນ ຄືຕ້ອງເປັນຄົນເອົາການເອົາງານ ບໍ່ເປັນຄົນສອງລີ້ນ ບໍ່ເປັນຄົນດື່ມເຫລົ້າ
ແວງເກີນສ່ວນ ບໍ່ເປັນຄົນໂລບເຫັນແກ່ໄດ້
1 ຕິໂມທຽວ 6:9,10 ສ່ວນຄົນເຫລົ່ານັ້ນທີ່ຢາກລ້ຳຮວຍກໍຕົກໃນການທົດລອງ ໃນບ້ວງແຮ້ວ
ແລະໃນຕັນຫາອັນໂງ່ຫລາຍຢ່າງ ຊຶ່ງເປັນໄພແກ່ຕົວທີ່ເຮັດໃຫ້ມະນຸດຈົມລົງໃນຄວາມວິ
ນາດຈິບຫາຍເສື່ອມສູນໄປ 10 ເພາະວ່າການຮັກເງິນຄຳເປັນເຄົ້າມູນຂອງຄວາມຊົ່ວທຸກ
ຢ່າງ ແລະເພາະເຫດຄວາມໂລບນີ້ແຫລະ ຈຶ່ງຊັກຈູງຜູ້ລາງຄົນໃຫ້ຫລົງໄປຈາກຄວາມເຊື່ອ
ແລະແທງຕົວເອງຈົນຊອດດ້ວຍຄວາມເຈັບແສບຫລາຍປະການ
2 ຕິໂມທຽວ 2:22 ດັ່ງນັ້ນເຈົ້າຈົ່ງຫລີກຫນີຈາກຣາຄະຕັນຫາຂອງຄົນຫນຸ່ມ ຈົ່ງຕິດຕາມ
ຄວາມຊອບທັມ ຄວາມເຊື່ອ ຄວາມຮັກ ແລະສັນຕິສຸກ ຮ່ວມກັບຄົນທັງປວງທີ່ອອກພຣະ
ນາມອົງພຣະຜູ້ເປັນເຈົ້າດ້ວຍໃຈບໍຣິສຸດ
2 ຕິໂມທຽວ 3:2 ເພາະວ່າຄົນທັງຫລາຍຈະເຫັນແກ່ຕົວ ເປັນແກ່ເງິນຄຳ ອວດຕົວ ຈອງຫອງ
ຊອບດ່າວ່າ ບໍ່ເຊື່ອຟັງຄວາມພໍ່ແມ່ ເນຣະຄຸນ ເປັນຄົນບໍ່ມີສິນທັມ
2 ຕິໂມທຽວ 3:6 ເພາະໃນບັນດາຄົນເຫລົ່ານັ້ນ ມີຄົນທີ່ມັກລ່ວງເຂົ້າໄປຕາມບ້ານເຮືອນ ກ້ຽວ
ກ່ອມເອົາໃຈຜູ້ຍິງທີ່ເບົາບັນຍາຫນາດ້ວຍຄວາມຜິດບາບ ແລະຫລົງໄຫລໄປດ້ວຍຕັນຫາ
ຕ່າງໆເອົາໄປເປັນຊະເລີຍ
2 ຕິໂມທຽວ 4:3 ເພາະຈະມີເວລານຶ່ງທີ່ເຂົາຈະບໍ່ທົນຮັບເອົາຄຳສອນອັນມີຫລັກ ແຕ່ຕາມ
ຄວາມປາຖນາຂອງເຂົານັ້ນ ເຂົາຈະຮວບຮວມຄຣູໄວ້ສຳລັບເຂົາເອງ ເພື່ອບັນເທົາຫູຄັນ
ຂອງເຂົາ

ຕິໂຕ 2:12 ແລະສອນເຮົາທັງຫລາຍໃຫ້ລະຖິ້ມຄວາມຊົ່ວອະທັມ ແລະກິເລດຕັນຫາຝ່າຍໂລກ ແລະໃຫ້ດຳເນີນຊີວິດຢູ່ໃນສະໄຫມນີ້ຢ່າງມີສະຕິອັນດີຮອບຄອບດ້ວຍຄວາມຍຸດຕິທັມ ແລະນັບຖືພຣະເຈົ້າຢ່າງຖືກຕ້ອງ

ຕິໂຕ 3:3 ເພາະວ່າເມື່ອກ່ອນນັ້ນພວກເຮົາເອງກໍເປັນຄົນໂງ່ ບໍ່ຍອມເຊື່ອຟັງ ຖືກເຂົາຫລອກລວງໃຫ້ຫລົງ ເປັນຂ້ອຍຂ້າຂອງກິເລດຕັນຫາ ແລະການສນຸກສນານຫລາຍປະການ ເຄີຍໃຊ້ເວລາໃນການຄິດຮ້າຍ ແລະໃນຄວາມເຫົ່ງສາ ເປັນຄົນຫນ້າຊັງ ແລະກຽດຊັງກັນ

ເຮັບເຣີ 13:5 ຈົ່ງໃຫ້ການດຳເນີນຊີວິດຂອງທ່ານ ເວັ້ນຈາກການຮັກເງິນຮັກຄຳ ຈົ່ງພໍໃຈໃນສິ່ງທີ່ຕົນມີຢູ່ ເພາະພຣະເຈົ້າເອງຊົງກ່າວໄວ້ວ່າ, “ເຮົາຈະບໍ່ປະເຈົ້າ ຫລືຖິ້ມເຈົ້າເສັຍຈັກເທື່ອ”

James 1:14,15

James 4:1-5

1 ເປໂຕ 1:14 ໂດຍທີ່ພວກທ່ານເປັນລູກທີ່ຟັງຄວາມ ຢ່າໄດ້ດຳເນີນຊີວິດຕາມກິເລດຕັນຫາແບບເກົ່າ ຢ່າງເມື່ອພວກທ່ານຍັງໂງ່ຢູ່

1 ເປໂຕ 2:11 ທ່ານທີ່ຮັກທັງຫລາຍເອີຍ, ຂ້າພະເຈົ້າຂໍເຕືອນສະຕິພວກທ່ານ ເຫມືອນເປັນຄົນຕ່າງຊາດທີ່ທ່ອງທ່ຽວໃນໂລກນີ້ ໃຫ້ງົດເວັ້ນຈາກຕັນຫາແນວມະນຸດ ຊຶ່ງທຳເສີກຕໍ່ສູ້ຈິດວິນຍານ

1 ເປໂຕ 4:2-4 ເພື່ອຈະບໍ່ດຳເນີນຊີວິດທີ່ຍັງເຫລືອຢູ່ໃນໂລກຕາມຄວາມປາຖນາຂອງມະນຸດ ແຕ່ດຳເນີນໄປຕາມນ້ຳພຣະທັຍຂອງພຣະເຈົ້າ 3 ດ້ວຍວ່າຄາວທີ່ລ່ວງພົ້ນໄປແລ້ວນັ້ນ ທີ່ໄດ້ເຮັດຕາມໃຈຊອບຂອງຄົນຕ່າງຊາດກໍພຽງພໍແລ້ວ ຄືຄາວເມື່ອໄດ້ເຮັດຕາມຣາຄະຕັນຫາ, ຕາມໃຈປາຖນາອັນຊົ່ວ ດື່ມເຫລົ້າເມົາສຸຣາ ລ້ຽງກັນຢ່າງເຖິງໃຈ ຮ່ວມກັນກິນເຫລົ້າເກີນສ່ວນ ແລະຂາບໄຫວ້ພຣະທຽມຊຶ່ງຜິດທັມ 4 ໃນເຣື່ອງນີ້ເຂົາກໍປລາດໃຈທີ່ພວກທ່ານບໍ່ຍອມແລ່ນໄປເຂົ້າສ່ວນກັບເຂົາ ໃນການຊົ່ວຮ້າຍອັນເຫລືອລົ້ນເຫມືອນຢ່າງເຂົາ ແລະເຂົາກໍກ່າວຄຳນິນທາໃສ່ພວກທ່ານ

2 ເປໂຕ 1:4 ດ້ວຍສິ່ງເຫລົ່ານີ້ພວກທ່ານຈຶ່ງຈະຫນີພົ້ນໄດ້ຈາກການເສື່ອມໂຊມທີ່ມີຢູ່ໃນໂລກນີ້ເພາະຕັນຫາ ແລະຈະໄດ້ຮັບສ່ວນໃນສະພາບຂອງພຣະອົງ

2 ເປໂຕ 2:3 ແລະດ້ວຍໃຈໂລບເຂົາຈະໄດ້ກຳໄຣຈາກພວກທ່ານດ້ວຍກ່າວຄຳຕົວະ ການລົງໂທດຄົນເຫລົ່ານັ້ນທີ່ໄດ້ຖືກພິພາກສາດົນນານມາແລ້ວກໍບໍ່ເສີຍຊ້າຢູ່ ຄວາມຈິບຫາຍທີ່ຈະເກີດກັບເຂົານັ້ນກໍບໍ່ໄດ້ລືມເຂົາ

2 ເປໂຕ 2:9-19 ດັ່ງນັ້ນ ອົງພຣະຜູ້ເປັນເຈົ້າຊົງຊາບວິທີຈະໂຜດເອົາຄົນທີ່ນັບຖືພຣະເຈົ້າໃຫ້
ພົ້ນຈາກການທົດລອງ ແລະຊົງຊາບວິທີຄຸມຮັກສາຄົນອະທັມໄວ້ ເພື່ອລົງໂທດເມື່ອວັນພິ
ພາກສາ 10 ເປັນຕົ້ນຈະຊົງລົງໂທດແກ່ຄົນເຫລົ່ານັ້ນທີ່ປ່ອຍຕົວໄປຕາມກິເລດຕັນຫາ
ແລະຫມິ່ນປມາດຕໍ່ອຳນາດທັງຫມົດ ຄຣູສອນປອມເຫລົ່ານີ້ມີໃຈກ້າກັ່ນແລະເຮັດຕາມອຳ
ເພີໃຈ ເຂົາບໍ່ສະທ້ານຕົກໃຈເມື່ອກ່າວປະນາມຕໍ່ຜູ້ມີຍົດສັກ 11 ເຖິງແມ່ນວ່າພວກເທວະ
ດາທີ່ມີຣິດກຳລັງຫລາຍກວ່າກໍຍັງບໍ່ນຳຄວາມພ້ອງມາກ່າວປະນາມຄົນເຫລົ່ານັ້ນຕໍ່ພຣະ
ພັກຂອງອົງພຣະຜູ້ເປັນເຈົ້າ 12 ແຕ່ຄົນເຫລົ່ານັ້ນເປັນເຫມືອນສັດເດັຈຣະສານທີ່ບໍ່ມີ
ຄວາມຄິດ ແລະເກີດມາຕາມທຳມະຊາດເພື່ອຖືກຈັບແລະຖືກຂ້າ ເຂົາກ່າວປະນາມສິ່ງທີ່
ເຂົາບໍ່ເຂົ້າໃຈ ເຂົາຈະຕ້ອງຈິບຫາຍໄປຢ່າງດຽວກັນກັບສັດເຫລົ່ານັ້ນ 13 ເຂົາຈະໄດ້ການອະ
ທັມເປັນຣາງວັນແຫ່ງການອະທັມຂອງຕົນ ເຂົາຖືເອົາການຫລິ້ນມ່ວນເຮຮາໃນເວລາກາງ
ເວັນເປັນຂອງສນຸກ ເຂົາດ່າງພ້ອຍແລະເປື້ອນເປີ ແລະໃຊ້ການຫລິ້ນເຮຮາຫລອກລວງ
ເມື່ອກຳລັງກິນລ້ຽງຮ່ວມກັບທ່ານທັງຫລາຍ 14 ຕາຂອງເຂົາກໍມັກເບິ່ງແຕ່ຍິງທີ່ລ່ວງປະ
ເວນີ ບໍ່ຍຸດບໍ່ຍັ້ງໃນການເຮັດບາບ ເຂົາກ້ຽວກ່ອມຄົນທີ່ມີໃຈບໍ່ທ່ຽງຫມັ້ນ ເຂົາມີໃຈເກັ່ງໃນ
ການໂລບ ເປັນຄົນທີ່ຖືກຊົງບ້ອຍດ່າແລ້ວ 15 ເຂົາໄດ້ປະຖິ້ມທາງຊື່ຈົ່ງຫລົງທາງໄປ ເຂົາ
ຕິດຕາມທາງຂອງບາລາອາມລູກໂບໂຊຣ ຜູ້ຊຶ່ງຊອບຣາງວັນທີ່ມາຈາກການອະທັມ 16
ແຕ່ບາລາອາມນັ້ນໄດ້ຖືກຕິເພາະການລະເມີດຂອງຕົນ ລໍຕົວປາກບໍ່ເປັນກໍຍັງໄດ້ປາກພາ
ສາມະນຸດ ແລະໄດ້ຫ້າມຄວາມບ້າຂອງບາລາອາມຜູ້ທຳນວາຍນັ້ນໃຫ້ເຊົາ 17 ຄົນເຫລົ່ານີ້
ເປັນບໍ່ທີ່ຂາດນ້ຳ ເປັນຫມອກທີ່ຖືກພະຍຸພັດໄປ ພຣະອົງຊົງຈັດຂຸມແຫ່ງຄວາມມືດອັດ
ເລີກລັບໄວ້ສຳລັບຄົນເຫລົ່ານັ້ນ 18 ເພາະວ່າເຂົາມັກກ່າວຄຳອວດອ້າງອັນເປົ່າໆແລະໃຊ້
ຄວາມປາຖນາຊົ່ວທາງກາຍຫລອກລວງຄົນທັງຫລາຍທີ່ກຳລັງຫນີພົ້ນຈາກຜູ້ທີ່ດຳເນີນຊີ
ວິດໃນການຫລົງຜິດ 19 ເຂົາສັນຍາວ່າຈະໃຫ້ຄົນເຫລົ່ານັ້ນມີອິສລະພາບ ແຕ່ຝ່າຍເຂົາເອງ
ກໍຍັງເປັນຂ້ອຍຂ້າຂອງຄວາມເສື່ອມໂຊມ ເພາະວ່າມະນຸດຖືກພ່າຍແພ້ແກ່ສິ່ງໃດແລ້ວ
ເຂົາຈະເປັນຂ້ອຍຂ້າຂອງສິ່ງນັ້ນ

2 ເປໂຕ 3:3 ກ່ອນອື່ນ, ຈົ່ງຮູ້ຂໍ້ນີ້ ຄືໃນຄາວສຸດທ້າຍຈະມີຄົນເຍາະເຍີ້ຍມາເວົ້າສງດສີຕາມໃຈ
ປາຖນາຂອງຕົນ

1 ໂຍຮັນ 2:15-17 ຢ່າຮັກໂລກຫລືສິ່ງຂອງທີ່ຢູ່ໃນໂລກ ຖ້າຜູ້ໃດຮັກໂລກ ຄວາມຮັກຕໍ່ພຣະບິ

ດາບ່ຢູ່ໃນຜູ້ນັ້ນ 16 ເພາະສາຣະພັດທີ່ມີຢູ່ໃນໂລກ ຄືຕັນຫາຂອງເນື້ອກາຍ, ຕັນຫາຂອງ
ຕາ, ແລະຄວາມອວດອ້າງເປົ່າໆໃນຊີວິດນີ້ ບ່ໄດ້ເກີດມາຈາກພຣະບິດາ ແຕ່ເກີດມາຈາກ
ໂລກ 17 ສ່ວນໂລກກັບຕັນຫາຂອງໂລກກຳລັງເສື່ອມສູນໄປ ແຕ່ຜູ້ເຮັດຕາມພຣະທັຍຂອງ
ພຣະເຈົ້າຈະຕັ້ງຢູ່ເປັນນິດ

ຢູດາ 1:11 ວິບັດຈົ່ງມີແກ່ເຂົາ ເພາະເຂົາໄດ້ຕິດຕາມທາງຂອງກາອິນໄປ ເຂົາໄດ້ປ່ອຍຕົວໄປ
ຕາມທາງຜິດຂອງບາລາອາມເພາະເຫັນແກ່ສິນຈ້າງ ແລະໄດ້ຈິບຫາຍໄປດ້ວຍການກະບົດ
ຕາມຢ່າງໂກຣາ

ຢູດາ 1:15-19 ເພື່ອຈົ່ງພິພາກສາລົງໂທດຄົນທັງປວງ ແລະຈົ່ງບັນດານໃຫ້ຜູ້ງຄົນທີ່ບໍ່ຢຳເກງ
ພຣະເຈົ້າຮູ້ສຶກຕົວ ເຖິງບັນດາການອະທັມທີ່ເຂົາໄດ້ເຮັດໃນການບໍ່ຢຳເກງພຣະເຈົ້ານັ້ນ
ແລະຮູ້ສຶກຕົວເຖິງຄຳຫຍາບຊ້າທີ່ຄົນບາບເຫລົ່ານັ້ນຜູ້ບໍ່ຢຳເກງພຣະເຈົ້າໄດ້ກ່າວໃສ່ຮ້າຍຕໍ່
ພຣະອົງ 16 ຄົນເຫລົ່ານີ້ເປັນຄົນມັກຈົ່ມມັກວ່າ, ເປັນຄົນເຮັດຕາມຄວາມປາຖນາອັນຊົ່ວ
ຂອງຕົນ ປາກຂອງເຂົາກໍອວດອ້າງດ້ວຍຄຳໃຫຍ່ເກີນສ່ວນ ແລະຍ້ອງຍໍຜູ້ອື່ນເພື່ອຫວັງປ
ໂຍດຂອງຕົນ 17 ແຕ່ຝ່ານທ່ານທັງຫລາຍເອີຍ, ຈົ່ງລະນຶກເຖິງຂໍ້ຄວາມທີ່ພວກອັຄສາວົກ
ຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍໄດ້ກ່າວໄວ້ກ່ອນ 18 ຄືເຂົາເຄີຍບອກພວກ
ທ່ານວ່າ, “ໃນສະໄຫມສຸດທ້າຍຈະມີຄົນເຍາະເຍີ້ຍບັງເກີດຂຶ້ນ ທີ່ຈະເຮັດຕາມຄວາມປາຖ
ນາຂອງຕົນເອງຢ່າງບໍ່ຢຳເກງພຣະເຈົ້າ 19 ແມ່ນຄົນເຫລົ່ານີ້ແຫລະ, ທີ່ເຮັດໃຫ້ແຕກ
ແຍກຈາກກັນ ເປັນຄົນມີນິສັຍຕາມທຳມະດາໂລກ ແລະບໍ່ມີພຣະວິນຍານ

ພຣະນິມິດ 18:14 “ຜົນຊຶ່ງຈິດໃຈຂອງເຈົ້າປາຖນາຍາກໄດ້ນັ້ນ ກໍລ່ວງພົ້ນໄປຈາກເຈົ້າແລ້ວ
ສິ່ງສາຣະພັດອັນປານີດວິເສດແລະງົດງາມເຫລື້ອມໃສ ກໍສູນເສັ້ງໄປຈາກເຈົ້າແລ້ວ ເຈົ້າຈະ
ບໍ່ໄດ້ພົບສິ່ງເຫລົ່ານີ້ອີກຈັກເທື່ອ”

Pastor T. John Franklin
Church of Salvation, Healing, and Deliverance
COS-HAD.org